# ລົງຄະແນນສຽງແຕ່ທຳອິດໂດຍໃຊ້ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

VOTE 2025

*ທີ່ລັດມິນນີໂຊຕາທ່ານບໍ່ຈຳເປັນຕ້ອງລໍຖ້າຈົນກ່ວາວັນເລືອກຕັ້ງ - ລົງຄະແນນສຽງແຕ່ທຳອິດນີ້ໂດຍໃຊ້ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້*

## ລົງຄະແນນສຽງແຕ່ທຳອິດໄດ້ດ້ວຍຕົວເອງ

ທ່ານສາມາດລົງຄະແນນໃນບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທີ່ສຳນັກງານເລືອກຕັ້ງທ້ອງຖິ່ນຂອງທ່ານເລີ່ມຕົ້ນ 46 ມື້ກ່ອນວັນເລືອກຕັ້ງ ໄປທີ່ mnvotes.gov ເພື່ອເບິ່ງຊົ່ວໂມງແລະສະຖານທີ່

## ລົງຄະແນນສຽງແຕ່ທຳອິດທາງໄປສະນີ

ທ່ານຍັງສາມາດສະໝັກຂໍຮັບບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ໃຫ້ສົ່ງໃຫ້ທ່ານທາງໄປສະນີ  ທ່ານຈະຕ້ອງໄດ້ສົ່ງບັດລົງຄະແນນສຽງຂອງທ່ານຄືນກ່ອນວັນເລືອກຕັ້ງ

① ສະໝັກຂໍຮັບບັດລົງຄະແນນສຽງໄດ້ເວລາໃດກໍໄດ້ໝົດປີທີ່ mnvotes.gov ພະນັກງານການເລືອກຕັ້ງຈະສົ່ງເອກກະສານການເລືອກຕັ້ງເມື່ອມີບັດລົງຄະແນນສຽງ (ເບິ່ງຂ້າງຫລັງສຳລັບວັນທີ)

② ອ່ານຄຳແນະນຳທີ່ມາພ້ອມກັບບັດລົງຄະແນນສຽງຂອງທ່ານຢ່າງຄັກແນ່!  ບັດລົງຄະແນນສຽງຂອງທ່ານຈະບໍ່ຖືກນັບຖ້າວ່າທ່ານກອກແບບຟອມບໍ່ສົມບູນ.

### ວັນທີຂອງປີ 2025

**ການເລືອກຕັ້ງຂັ້ນຕົ້ນ**
*ວັນອັງຄານ, ວັນທີ 12 ສິງຫາ*

**ລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້**
*ລົງຄະແນນສຽງທາງໄປສະນີ ຫຼືດ້ວຍຕົວເອງວັນທີ 19 ກັນຍາ ເຖິງ 3 ພຶດສະຈິກາ*

**ລົງທະບຽນເພື່ອລົງຄະແນນສຽງ**
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 14 ຕູລາ ເພື່ອຊ່ວຍປະຢັດເວລາ ໃນວັນເລືອກຕັ້ງ*

**ວັນເລືອກຕັ້ງ**
*ວັນອັງຄານ ວັນທີ່4ເດືອນພຶດສະຈິກາ*

③ ທ່ານຈະຕ້ອງມີພະຍານເວລາທີ່ທ່ານລົງຄະແນນສຽງແລະຂຽນບັດລົງຄະແນນສຽງຂອງທ່ານ ພະຍານສາມາດເປັນຜູ້ລົງທະບຽນອອກສຽງເລືອກຕັ້ງຂອງລັດມິນນີໂຊຕາຫຼືຈະເປັນໂນທາຣີກໍໄດ້ ພະຍານຂອງທ່ານຕ້ອງໄດ້ເຊັນຊອງຈົດໝາຍລາຍເຊັນແລະບອກທີ່ຢູ່ຂອງເຂົາເຈົ້ານຳ.

④ ຖ້າວ່າທ່ານບໍ່ໄດ້ລົງທະບຽນເພື່ອລົງຄະແນນສຽງແລ້ວ  ທ່ານຈະໄດ້ຮັບຄຳຮ້ອງສະໝັກຈົດທະບຽນໃນເອກກະສານຂອງທ່ານ  ຖ້າຈະລົງທະບຽນ ໃຫ້ສະແດງໃຫ້ພະຍານເຫັນບັດປະຈຳຕົວອັນໃດກໍໄດ້ທີ

ມີຕໍ່ຂ້າງຫລັງ...

**ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ**
**mnvotes.gov • 1-877-600-VOTE**

# ລົງຄະແນນສຽງແຕ່ທຳອິດໂດຍໃຊ້ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

**VOTE 2025**

...ສືບຕໍ່ຈາກຂ້າງໜ້າ

ລະບຸໄວ້ໃນຄຳແນະນຳ ພະຍານຂອງທ່ານຕ້ອງໄດ້ໝາຍໃສ່ຊອງຈົດໝາຍລາຍເຊັນຂອງທ່ານວ່າບັດປະຈຳຕົວອັນໃດທີ່ທ່ານສະແດງໃຫ້ເຂົາເຈົ້າເຫັນ.

⑤ ຫຼັງຈາກທີ່ທ່ານໝາຍແລ້ວໆ ໃຫ້ທ່ານສົ່ງບັດລົງຄະແນນສຽງແລະແບບຟອມກັບຄືນມາທັນທີ ບັດລົງຄະແນນສຽງຂອງທ່ານຈະບໍ່ຖືກນັບ ຖ້າວ່າພວກເຮົາໄດ້ຮັບຫຼັງຈາກວັນເລືອກຕັ້ງ ນອກນັ້ນທ່ານຍັງສາມາດສົ່ງບັດລົງຄະແນນສຽງຂອງທ່ານກັບຄືນດ້ວຍຕົວເອງໃຫ້ພະນັກງານການເລືອກຕັ້ງທີ່ສົ່ງບັດລົງຄະແນນສຽງໃຫ້ທ່ານ

## ຕິດຕາມບັດລົງຄະແນນສຽງຂອງທ່ານ

ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທຸກບັດທີ່ໄດ້ຮັບທັນເວລາ ແລະກອກແບບຟອມຢ່າງຖືກຕ້ອງຈະຖືກນັບ ໄປທີ່ mnvotes.gov ເພື່ອຕິດຕາມສະຖານະພາບບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານແລະເພື່ອຢືນຢັນວ່າມັນໄດ້ຮັບແລະຖືກນັບ.

| ວັນທີປີ 2025 | ການເລືອກຕັ້ງຂັ້ນຕົ້ນ | ການເລືອກຕັ້ງທົ່ວໄປ |
|---|---|---|
| **ບັດລົງຄະແນນສຽງເລີ່ມຕົ້ນສົ່ງ** | ວັນສຸກ ວັນທີ່ 27 ມິຖຸນາ | ວັນສຸກ ວັນທີ່ 19 ກັນຍາ |
| **ແນະນຳໃຫ້ທ່ານໄດ້ສະໝັກກ່ອນ** | ວັນສຸກ ວັນທີ່ 11 ກໍລະກົດ | ວັນສຸກ ວັນທີ່ 3 ຕຸລາ |
| **ວັນທີບັດລົງຄະແນນສຽງຈະຕ້ອງໄດ້ຮັບ** | ວັນເລືອກຕັ້ງ ວັນອັງຄານ ວັນທີ 12 ສິງຫາ | ວັນເລືອກຕັ້ງ ວັນອັງຄານທີ 4 ພຶດສະຈິກາ |

*ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ*

*mnvotes.gov • 1-877-600-VOTE*